ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LAO ASEAN LEASING PUBLIC COMPANY

ເລກທີ: ….7986…..
ນະຄອນຫຼວງວຽງຈັນ, ວັນທີ: 13 ກັນຍາ 2022

ຮຽນ: ທ່ານ ເລຂາທິການ ສໍານັກງານຄະນະກໍາມະການ ຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອໍານວຍການໃຫຍ່ ຕະລາດຫຼັກຊັບລາວ
ທ່ານ ຜູ້ຖືຮຸ້ນ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິຂອງກອງປະຊຸມວິສາມັນຜູ້ຖືຮຸ້ນຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 28 ມັງກອນ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ເປັນກຽດຂໍແຈ້ງມະຕິຂອງ ກອງປະຊຸມວິສາມັນຜູ້ຮຸ້ນໃນວັນທີ 13 ກັນຍາ 2022 ເວລາ 13:30 ຕອນແລງ ທີ່ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ຊັ້ນ 1,ຕຶກ NNN, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມທັງໝົດ 15 ທ່ານຊຶ່ງແມ່ນ ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ, ຖືຮຸ້ນລວມທັງໝົດ 297,880,800 ຮຸ້ນ ຫຼື 98,80% ຂອງຈໍານວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມມີມະຕິດັ່ງນີ້:

ວາລະທີ 1 ພິຈາລະນາ ແລະ ຮັບຮອງການຈ່າຍເງິນປັນຜົນ ຈາກກໍາໄລສະສົມຮອດທ້າຍປີ 2021.

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297,880,800 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297,880,800 ສຽງ ຫຼື ເທົ່າກັບ 100%

ວາລະທີ 2 ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ Yoshihito Oshima ເປັນສະມາຊິກສະພາ ບໍລິຫານຄົນໃໝ່, , ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການ ຄັດເລືອກ, ເປັນຜູ້ອຳນວຍການໃຫຍ່ (ເປັນຕົວແທນທາງດ້ານກົດໝາຍ ທີ່ຂອກຊື່ໃນໃບທະບຽນວິ ສາຫະກິດ ຄົນໃໝ່), ເປັນ ປະທານເຈົ້າໜ້າທີ່ບໍລິຫານ

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297,880,800 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297,880,800 ສຽງ ຫຼື ເທົ່າກັບ 100%

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆ. ດັ່ງນັ້ນ, ກອງປະຊຸມ ຈຶ່ງໄດ້ປິດລົງ ໃນເວລາ 14:30 ຕອນແລງ.

ດ້ວຍຄວາມນັບຖືຢ່າງສູງ
ຜູ້ຕາງໜ້າກອງປະຊຸມ

ບໍລິສັດ ລາວ ຮາ ຊຸນ ເຊົ່າສິນເຊື່ອ ມະຫາຊົນ LAO HASAN LEASING PUBLIC COMPANY

ທ່ານ Yoshihito Oshima